ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 74 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28 ມັງກອນ 2020

# ຂໍ້ຕົກລົງ
# ວ່າດ້ວຍມາດຕະຖານລາວຄິວອາ ເພື່ອການຊຳລະ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 16 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຄຸ້ມຄອງລະບົບຊຳລະສະສາງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະຖານ, ຫຼັກການ ແລະ ລະບຽບການ ກ່ຽວກັບການນຳໃຊ້ລະຫັດຄິວອາ ເພື່ອຄຸ້ມຄອງ ແລະ ນຳໃຊ້ລະຫັດຄິວອາໃຫ້ເປັນເອກະພາບກັນ ແນໃສ່ເຮັດໃຫ້ລະບົບການຊຳລະມີປະສິດທິຜົນ, ທັນເປັນທັນສະໄໝ, ສົ່ງເສີມການນຳໃຊ້ເຕັກໂນໂລຊີເຂົ້າໃນຂະແໜງການເງິນ, ຫຼຸດຜ່ອນການນຳໃຊ້ເງິນສົດ, ສາມາດເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ.

**ມາດຕາ 2 ມາດຕະຖານລາວຄິວອາ ເພື່ອການຊຳລະ**

ລາວຄິວອາ (Lao QR) ແມ່ນລະຫັດຄິວອາ ເພື່ອການຊຳລະ ຂອງ ສປປ ລາວ ຊຶ່ງສ້າງ ແລະ ພັດທະນາຕາມມາດຕະຖານດຽວກັນ ແລະ ສາມາດນຳໃຊ້ເຂົ້າໃນການຊຳລະຮ່ວມກັນ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕະຖານລາວຄິວອາ ເພື່ອການຊຳລະ ແມ່ນການກຳນົດເນື້ອໃນຂໍ້ມູນຂອງລະຫັດຄິວອາ ເພື່ອຮອງຮັບການໃຫ້ບໍລິການຊຳລະ ຢູ່ ສປປ ລາວ ທີ່ມີມາດຕະຖານດຽວກັນ ແລະ ສອດຄ່ອງຕາມມາດຕະຖານອີເອັມວີ ຄິວອາຊີພີເອັສ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ໃຫ້ບໍລິການຊຳລະ** ໝາຍເຖິງ ຜູ້ໃຫ້ບໍລິການເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຜ່ານລາວຄິວອາ ໃຫ້ແກ່ຜູ້ໃຊ້ບໍລິການ ເພື່ອຊຳລະຄ່າສິນຄ້າ, ຄ່າບໍລິການ, ໂອນເງິນ ຫຼື ເຮັດທຸລະກຳທາງການເງິນ;

2. **ຜູ້ໃຊ້ບໍລິການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຜ່ານລາວຄິວອາ ຂອງຜູ້ໃຫ້ບໍລິການຊຳລະເພື່ອຊຳລະຄ່າສິນຄ້າ, ຄ່າບໍລິການ, ໂອນເງິນ ຫຼື ເຮັດທຸລະກຳທາງການເງິນ;

3. **ຜູ້ຮັບຊຳລະ** (Merchant) ໝາຍເຖິງ ຜູ້ຂາຍສິນຄ້າ ຫຼື ບໍລິການ ທີ່ຮັບຊຳລະຄ່າສິນຄ້າ ຫຼື ບໍລິການ ດ້ວຍເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຜ່ານລາວຄິວອາຂອງຜູ້ໃຫ້ບໍລິການຊຳລະຢູ່ສະຖານທີ່ຕ່າງໆ ເຊັ່ນ: ຮ້ານຄ້າ, ໂຮງແຮມ, ສະຖານທີ່ທ່ອງທ່ຽວ ທີ່ສະແດງລາວຄິວອາ ໃຫ້ຜູ້ໃຊ້ບໍລິການເປັນຜູ້ສະແກນ ເພື່ອຊຳລະຄ່າສິນຄ້າ, ຄ່າບໍລິການ, ໂອນເງິນ ຫຼື ເຮັດທຸລະກຳທາງການເງິນ;

4. **ຜູ້ຄວບຄຸມລະບົບການຊຳລະທຸລະກຳຍ່ອຍ** ໝາຍເຖິງ ຜູ້ຄວບຄຸມລະບົບ ແລະ ຜູ້ໃຫ້ບໍລິການ ລະບົບການຊຳລະທຸລະກຳຍ່ອຍໃຫ້ແກ່ສະມາຊິກ ເປັນລະບົບສູນກາງເຊື່ອມຕໍ່ລະຫວ່າງສະມາຊິກຂອງລະບົບ ເພື່ອຮອງຮັບການໂອນເງິນ, ການໄລ່ລຽງ ແລະ ການຫັກບັນຊີ ທີ່ມີມູນຄ່າຕໍ່າ ທີ່ໃຫ້ບໍລິການເຄື່ອງມືການຊຳລະ ຫຼື ສື່ການຊຳລະ ຜ່ານລາວຄິວອາ ທີ່ສາມາດໃຊ້ຮ່ວມກັນໄດ້;

5. **ອີເອັມວີ ຄິວອາຊີພີເອັສ** (EMV QR Code Specification for Payment Systems Version 1.0-EMV QRCPS) ໝາຍເຖິງ ມາດຕະຖານຂອງອີເອັມວີໂຄ ເປັນຜູ້ຄົ້ນຄວ້າ ແລະ ປະກາດນຳໃຊ້ເປັນມາດຕະຖານສາກົນ ທີ່ຜູ້ຮັບຊຳລະເປັນຜູ້ສະແດງລາວຄິວອາ ໃຫ້ຜູ້ໃຊ້ບໍລິການສະແກນ (Merchant-Presented Mode).

6. **ອີເອັມວີໂຄ** (Europay, Mastercard, and Visa Company-EMVCo) ໝາຍເຖິງ ໜ່ວຍງານດ້ານເຕັກນິກລະດັບໂລກ ທີ່ສ້າງຕັ້ງຂຶ້ນຈາກຄວາມຮ່ວມມືກັນຂອງກຸ່ມຜູ້ໃຫ້ບໍລິການເຄືອຂ່າຍບັດສາກົນ ປະກອບມີ American Express, Discover, JCB, Mastercard, UnionPay ແລະ Visa.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ຄວບຄຸມລະບົບການຊຳລະທຸລະກຳຍ່ອຍ, ຜູ້ໃຫ້ບໍລິການຊຳລະ, ຜູ້ຮັບຊຳລະ, ຜູ້ໃຊ້ບໍລິການ ແລະ ຜູ້ເຂົ້າຮ່ວມອື່ນ ທີ່ກ່ຽວຂ້ອງກັບການຊຳລະຜ່ານລາວຄິວອາ.

## ໝວດທີ 2
## ເນື້ອໃນ ແລະ ຂໍ້ມູນ ຂອງມາດຕະຖານລາວຄິວອາ ເພື່ອການຊຳລະ

**ມາດຕາ 5 ເນື້ອໃນຂອງມາດຕະຖານລາວຄິວອາ ເພື່ອການຊຳລະ**

ເນື້ອໃນຂອງມາດຕະຖານລາວຄິວອາ ເພື່ອການຊຳລະ ແມ່ນການກຳນົດຄ່າຕົວເລກແທນຄວາມໝາຍຂອງບັນດາຂໍ້ມູນ ທີ່ຈະນຳມາສ້າງ (Generate) ເປັນລາວຄິວອາ ຊຶ່ງປະກອບມີ ລະຫັດຫຼັກ (ID), ລະຫັດຍ່ອຍ (Sub ID), ເນື້ອໃນຂໍ້ມູນ (Data Object), ຄວາມຍາວຂອງຂໍ້ມູນ (Length), ຄ່າຂອງຂໍ້ມູນ (Value Field), ຮູບແບບ (Format) ແລະ ການສະແດງຂໍ້ມູນ (Presence) ໃຫ້ເປັນມາດຕະຖານດຽວກັນ.

**ມາດຕາ 6 ການຈັດລຽງຂໍ້ມູນມາດຕະຖານລາວຄິວອາ ເພື່ອການຊຳລະ**

ການຈັດລຽງຂໍ້ມູນມາດຕະຖານລາວຄິວອາ ເພື່ອການຊຳລະ ແມ່ນການຈັດວາງລຳດັບເນື້ອໃນຂໍ້ມູນຂອງລະຫັດຫຼັກ ແລະ ລະຫັດຍ່ອຍ ຕາມມາດຕະຖານອີເອັມວີ ຄິວອາຊີພີເອັສ ທີ່ມີ ສາມ ອົງປະກອບ ຄື ເນື້ອໃນຂໍ້ມູນ, ຄວາມຍາວ ແລະ ຄ່າຂໍ້ມູນ.

1. ເນື້ອໃນຂໍ້ມູນ (Data Object) ແມ່ນ ຂໍ້ມູນທີ່ຍັ້ງຢືນຕົວຕົນຂອງລະຫັດ ຊຶ່ງແຕ່ລະລະຫັດແທນດ້ວຍຕົວເລກແຕ່ “00” ຫາ “99” ແລະ ລະຫັດຍ່ອຍ (Sub ID) ແຕ່ “00” ຫາ “99”;
2. ຄວາມຍາວຂອງຂໍ້ມູນ (Length) ແມ່ນຄວາມຍາວຂອງຂໍ້ມູນທີ່ຈະບັນຈຸຢູ່ໃນແຕ່ລະລະຫັດຫຼັກ (ID) ແລະ ລະຫັດຍ່ອຍ (Sub ID) ຊຶ່ງຄວາມຍາວຂອງຂໍ້ມູນຢູ່ລະຫວ່າງ “01” ຫາ “99”;
3. ຄ່າຂອງຂໍ້ມູນ (Value Field) ແມ່ນຄ່າຂອງຂໍ້ມູນທີ່ຈະບັນຈຸຢູ່ໃນແຕ່ລະລະຫັດຫຼັກ (ID) ແລະ ລະຫັດຍ່ອຍ (Sub ID) ຊຶ່ງຄ່າຂອງຂໍ້ມູນປະກອບມີ ຄວາມຍາວຂອງຂໍ້ມູນ, ຮູບແບບ ແລະ ການສະແດງຂໍ້ມູນ.

ການຈັດລຽງເນື້ອໃນ ແລະ ຂໍ້ມູນ ຂອງມາດຕະຖານລາວຄິວອາ ເພື່ອການຊຳລະ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 1.

**ມາດຕາ 7 ເນື້ອໃນຂອງກຸ່ມຂໍ້ມູນທີ່ບັນຈຸໃນມາດຕະຖານລາວຄິວອາ ເພື່ອການຊຳລະ**

ເນື້ອໃນຂອງກຸ່ມຂໍ້ມູນທີ່ບັນຈຸໃນມາດຕະຖານລາວຄິວອາ ເພື່ອການຊຳລະ ທີ່ກຳນົດໄວ້ແຕ່ລະລະຫັດຫຼັກ ແລະ ລະຫັດຍ່ອຍ ຕາມມາດຕະຖານອີເອັມວີ ຄິວອາຊີພີເອັສ ຕ້ອງປະກອບມີຂໍ້ມູນ ຫ້າ ກຸ່ມ ຄື:

1. ກຸ່ມຂໍ້ມູນທົ່ວໄປ (Convention);
2. ກຸ່ມຂໍ້ມູນບັນຊີຜູ້ຮັບຊຳລະ (Merchant Account Information);
3. ກຸ່ມຂໍ້ມູນເພີ່ມເຕີມຂອງຜູ້ຮັບຊຳລະ (Additional Information on the Merchant);
4. ກຸ່ມຂໍ້ມູນກ່ຽວກັບມູນຄ່າຂອງທຸລະກຳ (Information on the Transaction Value);
5. ກຸ່ມຂໍ້ມູນເພີ່ມເຕີມ (Additional Data).

ກຸ່ມຂໍ້ມູນບັນຊີຜູ້ຮັບຊຳລະ ຊຶ່ງມີລະຫັດຫຼັກ 38 (ID 38) ແມ່ນມາດຕະຖານລາວຄິວອາ ເພື່ອການຊຳລະຂອງ ສປປ ລາວ ແລະ ລະຫັດຫຼັກ 39 (ID 39) ແມ່ນນຳໃຊ້ສຳລັບການພັດທະນານະວັດຕະກຳໃໝ່ໃນອະນາຄົດ.

**ມາດຕາ 8 ກຸ່ມຂໍ້ມູນທົ່ວໄປ**

ກຸ່ມຂໍ້ມູນທົ່ວໄປ ແມ່ນບັນດາລາຍການຂໍ້ມູນທີ່ບັນຈຸຢູ່ໃນລາວຄິວອາ ຕາມມາດຕະຖານ ອີເອັມວີ ຄິວອາຊີ ພີເອັສ ທີ່ຈຳເປັນຕ້ອງມີໃນລະຫັດຄິວອາໃດໜຶ່ງ ເພື່ອກຳນົດ ລຸ້ນ, ຮູບແບບ ແລະ ການກວດສອບຄວາມຖືກຕ້ອງ ຂອງຕົວເລກ ແລະ ຕົວອັກສອນທັງໝົດໃນລາວຄິວອາ ຊຶ່ງມີລະຫັດຫຼັກ "00", "01" ແລະ "63".

ກຸ່ມຂໍ້ມູນທົ່ວໄປຕາມມາດຕະຖານລາວຄິວອາ ເພື່ອການຊຳລະ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 2.

**ມາດຕາ 9 ກຸ່ມຂໍ້ມູນບັນຊີຜູ້ຮັບຊຳລະ**

ກຸ່ມຂໍ້ມູນບັນຊີຜູ້ຮັບຊຳລະ ແມ່ນບັນດາລາຍການຂໍ້ມູນຂອງຜູ້ຮັບຊຳລະທີ່ບັນຈຸຢູ່ໃນລາວຄິວອາ ຕາມມາດຕະຖານລາວຄິວອາ ເພື່ອການຊຳລະຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

ກຸ່ມຂໍ້ມູນບັນຊີຜູ້ຮັບຊຳລະ ຕາມມາດຕະຖານລາວຄິວອາ ເພື່ອການຊຳລະ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 3.

ລະຫັດຫຼັກ 38 (ID 38) ປະກອບມີລະຫັດຍ່ອຍ ດັ່ງນີ້:

1. ລະຫັດຍ່ອຍ "00" (Application Identifier-AID) ແມ່ນລະຫັດທີ່ໃຊ້ລະບຸຕົວຕົນຂອງລະບົບໂປຣແກຣມທີ່ນຳໃຊ້ ສຳລັບການດຳເນີນທຸລະກຳການຊຳລະຜ່ານລາວຄິວອາ ຂອງ ສປປ ລາວ, AID ເປັນລະຫັດຍ່ອຍສະເພາະຂອງລະບົບໂປຣແກຣມທີ່ບໍ່ຊ້ຳກັນໃນທົ່ວໂລກ ເນື່ອງຈາກຕ້ອງລົງທະບຽນນຳອົງການຈັດຕັ້ງສາກົນ;
2. ລະຫັດຍ່ອຍ "01" (Issuer Identification Number-IIN) ແມ່ນລະຫັດທີ່ໃຊ້ລະບຸຕົວຕົນຂອງຜູ້ໃຫ້ບໍລິການຊຳລະ ຊຶ່ງຜູ້ຄວບຄຸມລະບົບການຊຳລະທຸລະກຳຍ່ອຍ ເປັນຜູ້ຄຸ້ມຄອງ ແລະ ສ້າງລະຫັດດັ່ງກ່າວໃຫ້ແກ່ສະມາຊິກຂອງຕົນ ໂດຍອີງຕາມລະບຽບການທີ່ກ່ຽວຂ້ອງ;
3. ລະຫັດຍ່ອຍ "02" ປະເພດການຊຳລະ (Payment Type) ແມ່ນລະຫັດທີ່ໃຊ້ລະບຸປະເພດຂອງການຊຳລະຜ່ານລາວຄິວອາ ຕາມເອກະສານຊ້ອນທ້າຍ 4;
4. ລະຫັດຍ່ອຍ "03" ລະຫັດຜູ້ຮັບເງິນ (Receiver-ID) ແມ່ນລະຫັດທີ່ໃຊ້ລະບຸຕົວຕົນຂອງຜູ້ຮັບເງິນໃນເວລາດຳເນີນທຸລະກຳຜ່ານລາວຄິວອາ;
5. ລະຫັດຍ່ອຍ "04" ລະຫັດໃບແຈ້ງໜີ້ (Invoice-ID) ແມ່ນລະຫັດທີ່ໃຊ້ລະບຸລະຫັດໃບແຈ້ງໜີ້ ເມື່ອຊຳລະຜ່ານລາວຄິວອາ ໂດຍອີງຕາມມູນຄ່າຕາມໃບແຈ້ງໜີ້;
6. ລະຫັດຍ່ອຍ "05" Terminal ID ແມ່ນລະຫັດທີ່ໃຊ້ລະບຸຕົວຕົນຂອງຮ້ານຄ້າທີ່ນຳໃຊ້ເຄື່ອງຮູດບັດ (Electronic Data Capture-EDC) ໃນການສ້າງ Dynamic ລາວຄິວອາ ເພື່ອຮັບຊຳລະຈາກລູກຄ້າ;
7. ລະຫັດຍ່ອຍ "06" ລະຫັດສາຂາ (Branch ID) ແມ່ນລະຫັດທີ່ໃຊ້ລະບຸຕົວຕົນສາຂາຂອງຜູ້ຮັບຊຳລະຜ່ານລາວຄິວອາ ໃນກໍລະນີຜູ້ຮັບຊຳລະມີຫຼາຍສາຂາເພີ່ມຂຶ້ນ;
8. ລະຫັດຍ່ອຍ "07" ລະຫັດສິນຄ້າ (Product ID) ແມ່ນລະຫັດທີ່ໃຊ້ລະບຸຕົວຕົນສິນຄ້າຂອງຜູ້ຮັບຊຳລະ ໃນກໍລະນີຜູ້ຮັບຊຳລະ ຕ້ອງການລະບຸລາຍລະອຽດຂອງສິນຄ້າທີ່ລູກຄ້າຊຳລະຜ່ານລາວຄິວອາ;
9. ລະຫັດຍ່ອຍ "08" ລະຫັດຢັ້ງຢືນການເຮັດທຸລະກຳ (Reference Number of Transaction) ແມ່ນເລກລະຫັດຢັ້ງຢືນການເຮັດທຸລະກຳການຊຳລະຜ່ານລາວຄິວອາ.

**ມາດຕາ 10 ກຸ່ມຂໍ້ມູນເພີ່ມເຕີມຂອງຜູ້ຮັບຊໍາລະ**

ກຸ່ມຂໍ້ມູນເພີ່ມເຕີມຂອງຜູ້ຮັບຊໍາລະ ແມ່ນບັນດາລາຍການຂໍ້ມູນທີ່ຢູ່ໃນລາວຄິວອາ ຕາມມາດຕະຖານອີເອັມວີ ຄິວອາຊີພີເອັສ ເພື່ອກໍານົດ ລະຫັດ ປະເພດຜູ້ຮັບຊໍາລະ, ປະເທດ, ຊື່ຜູ້ຮັບຊໍາລະ, ທີ່ຕັ້ງຂອງເມືອງທີ່ຜູ້ຮັບຊໍາລະ, ໄປສະນີ ຜູ້ຮັບຊໍາລະ ແລະ ພາສາທ້ອງຖິ່ນທີ່ໃຊ້ ຊຶ່ງປະກອບມີລະຫັດຫຼັກ "52", "58", "59", "60", "61" ແລະ "64".

ກຸ່ມຂໍ້ມູນເພີ່ມເຕີມຂອງຜູ້ຮັບຊໍາລະຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 4.

**ມາດຕາ 11 ກຸ່ມຂໍ້ມູນກ່ຽວກັບມູນຄ່າຂອງທຸລະກໍາ**

ກຸ່ມຂໍ້ມູນກ່ຽວກັບມູນຄ່າຂອງທຸລະກໍາ ແມ່ນບັນດາລາຍການຂໍ້ມູນທີ່ບັນຈຸຢູ່ໃນລາວຄິວອາ ຕາມມາດຕະຖານອີເອັມວີ ຄິວອາຊີພີເອັສ ເພື່ອກໍານົດ ລະຫັດ ສະກຸນເງິນ, ຈໍານວນເງິນ, ມູນຄ່າສ່ວນຕ່າງທາງການຄ້າ, ອາກອນມູນຄ່າເພີ່ມ, ຄ່າທໍານຽມທີ່ຄິດໄລ່ເປັນມູນຄ່າຄົງທີ່ ແລະ ຄ່າທໍານຽມທີ່ຄິດໄລ່ເປັນສ່ວນຮ້ອຍ ຊຶ່ງປະກອບມີລະຫັດຫຼັກ "53", "54", "55", "56", "57" ແລະ "81".

ກຸ່ມຂໍ້ມູນກ່ຽວກັບມູນຄ່າຂອງທຸລະກໍາຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 5.

**ມາດຕາ 12 ກຸ່ມຂໍ້ມູນເພີ່ມເຕີມ**

ກຸ່ມຂໍ້ມູນເພີ່ມເຕີມ ແມ່ນບັນດາລາຍການຂໍ້ມູນທີ່ບັນຈຸຢູ່ໃນລາວຄິວອາ ຕາມມາດຕະຖານອີເອັມວີ ຄິວອາຊີພີເອັສ ທີ່ຂໍ້ມູນອາດຈະສະແດງ ຫຼື ບໍ່ສະແດງກໍໄດ້ ໃນມາດຕະຖານລາວຄິວອາ ເພື່ອການຊໍາລະ ຊຶ່ງປະກອບມີລະຫັດຫຼັກ "62".

ກຸ່ມຂໍ້ມູນເພີ່ມເຕີມຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 6.

## ໝວດທີ 3
## ການຊໍາລະຜ່ານລາວຄິວອາ

**ມາດຕາ 13 ປະເພດການຊໍາລະຜ່ານລາວຄິວອາ**

ປະເພດການຊໍາລະຜ່ານລາວຄິວອາ ແມ່ນກໍານົດເອົາລະຫັດຫຼັກ "38" ເປັນລະຫັດຫຼັກທີ່ຢັ້ງຢືນປະເພດການຊໍາລະຜ່ານລະຫັດຄິວອາໃດໜຶ່ງ ດັ່ງນີ້:

1. ການໂອນເງິນຜ່ານລາວຄິວອາ (Credit Fund Transfer);
2. ການຊໍາລະຜ່ານລາວຄິວອາ ນໍາຜູ້ຮັບຊໍາລະ (QR Payment);
3. ການຊໍາລະຜ່ານລາວຄິວອາ ຕາມໃບບິນ (Bill Payment);

4. ການບໍລິຈາກຜ່ານລາວຄິວອາ (e-Donation);

5. ການຄ້າທາງເອເລັກໂຕຣນິກຜ່ານລາວຄິວອາ (e-Commerce);

6. ການຊໍາລະປະເພດອື່ນ ໃນອະນາຄົດ (Reserved for Future Use).

ປະເພດການຊໍາລະຜ່ານລາວຄິວອາ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 7.

**ມາດຕາ 14 ການໂອນເງິນຜ່ານລາວຄິວອາ**

ການໂອນເງິນຜ່ານລາວຄິວອາ ແມ່ນຜູ້ໃຫ້ບໍລິການຊໍາລະ ທີ່ໃຫ້ບໍລິການໂອນເງິນຜ່ານລາວຄິວອາ ຕ້ອງຕິດຕັ້ງໂປຣແກຣມໂທລະສັບ ໃຫ້ຮອງຮັບການໂອນເງິນຜ່ານລະບົບຂອງຜູ້ຄວບຄຸມລະບົບການຊໍາລະທຸລະກໍາຍ່ອຍ ຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ ແລະ ຕ້ອງມີການກໍານົດລາຍການຂໍ້ມູນຕໍ່າສຸດ ທີ່ສະແດງໃນການໂອນເງິນຜ່ານ ລາວຄິວອາ.

ຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນການໂອນເງິນຜ່ານລາວຄິວອາ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 8.

**ມາດຕາ 15 ການຊໍາລະຜ່ານລາວຄິວອາ ນໍາຜູ້ຮັບຊໍາລະ**

ການຊໍາລະຜ່ານລາວຄິວອາ ນໍາຜູ້ຮັບຊໍາລະ ແມ່ນຜູ້ໃຫ້ບໍລິການຊໍາລະຈະສ້າງລາວຄິວອາ ໃຫ້ແກ່ຜູ້ຮັບຊໍາລະ ເພື່ອຮອງຮັບການຮັບຊໍາລະຄ່າສິນຄ້າ ແລະ ບໍລິການ ຜ່ານລະບົບຂອງຜູ້ຄວບຄຸມລະບົບການຊໍາລະທຸລະກໍາຍ່ອຍ ຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ ແລະ ຕ້ອງມີການກໍານົດລາຍການຂໍ້ມູນຕໍ່າສຸດທີ່ສະແດງໃນການຊໍາລະຜ່ານລາວຄິວອາ ນໍາຜູ້ຮັບຊໍາລະ.

ຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນການຊໍາລະຜ່ານລາວຄິວອາ ນໍາຜູ້ຮັບຊໍາລະ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 9.

**ມາດຕາ 16 ການຊໍາລະເງິນຜ່ານລາວຄິວອາ ຕາມໃບແຈ້ງໜີ້**

ການຊໍາລະເງິນຜ່ານລາວຄິວອາ ຕາມໃບແຈ້ງໜີ້ ແມ່ນຜູ້ໃຫ້ບໍລິການຊໍາລະ ທີ່ໃຫ້ບໍລິການຮັບຊໍາລະຜ່ານລາວຄິວອາ ຈະສ້າງລາວຄິວອາ ໃຫ້ແກ່ຜູ້ຮັບຊໍາລະຕາມໃບແຈ້ງໜີ້ ເພື່ອໃຫ້ຜູ້ໃຊ້ບໍລິການສາມາດຊໍາລະ ຜ່ານລະບົບຂອງຜູ້ຄວບຄຸມລະບົບການຊໍາລະທຸລະກໍາຍ່ອຍ ຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ ແລະ ຕ້ອງມີການກໍານົດລາຍການຂໍ້ມູນຕໍ່າສຸດທີ່ສະແດງໃນການຊໍາລະຜ່ານລາວຄິວອາ ຕາມໃບແຈ້ງໜີ້.

ຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນການຊໍາລະຜ່ານລາວຄິວອາ ຕາມໃບແຈ້ງໜີ້ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 10.

**ມາດຕາ 17 ການຮັບບໍລິຈາກຜ່ານລາວຄິວອາ**

ການຮັບບໍລິຈາກຜ່ານລາວຄິວອາ ແມ່ນຜູ້ໃຫ້ບໍລິການຊຳລະທີ່ ໃຫ້ບໍລິການຮັບຊຳລະຜ່ານລາວຄິວອາ ຈະສ້າງລາວຄິວອາ ໃຫ້ແກ່ຜູ້ຮັບຊຳລະ ເພື່ອໃຫ້ຜູ້ໃຊ້ບໍລິການ ສາມາດບໍລິຈາກເພື່ອຊ່ວຍເຫຼືອສັງຄົມ ຜ່ານລະບົບຂອງຜູ້ຄວບຄຸມລະການບົບຊຳລະທຸລະກຳຍ່ອຍ ຕາມມາດຕະຖານລາວຄິວອາ ເພື່ອການຊຳລະ ແລະ ຕ້ອງມີການກຳນົດລາຍການຂໍ້ມູນຕໍ່າສຸດທີ່ສະແດງໃນ ການຮັບບໍລິຈາກຜ່ານລາວຄິວອາ.

ຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນ ການຮັບບໍລິຈາກຜ່ານລາວຄິວອາ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 11.

**ມາດຕາ 18 ການຄ້າທາງເອເລັກໂຕຣນິກຜ່ານລາວຄິວອາ**

ການຄ້າທາງເອເລັກໂຕຣນິກຜ່ານລາວຄິວອາ ແມ່ນຜູ້ໃຫ້ບໍລິການຊຳລະ ທີ່ໃຫ້ບໍລິການຮັບຊຳລະຜ່ານລາວຄິວອາ ຈະສ້າງລາວຄິວອາ ໃຫ້ແກ່ຜູ້ຮັບຊຳລະ ເພື່ອໃຫ້ຜູ້ໃຊ້ບໍລິການ ສາມາດຮອງຮັບການຄ້າທາງເອເລັກໂຕຣນິກ ຜ່ານລະບົບຂອງຜູ້ຄວບຄຸມລະບົບການຊຳລະທຸລະກຳຍ່ອຍ ຕາມມາດຕະຖານລາວຄິວອາ ເພື່ອການຊຳລະ ແລະ ການກຳນົດລາຍການຂໍ້ມູນຕໍ່າສຸດທີ່ສະແດງໃນ ການຄ້າທາງເອເລັກໂຕຣນິກຜ່ານລາວຄິວອາ.

ຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນ ການຄ້າທາງເອເລັກໂຕຣນິກຜ່ານລາວຄິວອາ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ 12.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງລະບົບຊຳລະສະສາງ, ຜູ້ໃຫ້ບໍລິການຊຳລະ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການຊຳລະຜ່ານລາວຄິວອາ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສອນໄຊ ສິດພະໄຊ**

## ເອກະສານຊ້ອນທ້າຍ 1: ການຈັດລຽງເນື້ອໃນ ແລະ ຂໍ້ມູນຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ

| ລະຫັດຫຼັກ (ID) | ເນື້ອໃນຂໍ້ມູນ (Data Object) | ຄວາມຍາວຂອງຂໍ້ມູນ (Length) | ຄ່າຂອງຂໍ້ມູນ (Value Field) | ລະຫັດຍ່ອຍ (Sub ID) | ເນື້ອໃນຂໍ້ມູນ (Data Object) | ຄວາມຍາວຂອງຂໍ້ມູນ (Length) | ຄ່າຂອງຂໍ້ມູນ (Value Field) | ຮູບແບບ (Format) | ຕົວຢ່າງ (Example) | ຄວາມໝາຍ (Description) |
|---|---|---|---|---|---|---|---|---|---|---|
| "00" | Payload format indicator | 02 | 01 | | | | | N | 000201 | ຊຸດຂໍ້ມູນທີ່ບົ່ງບອກ Version ຂອງ ມາດຕະຖານ ລາວຄິວອາ ວ່າເປັນ Version 01. |
| "01" | Point of initiation method | 02 | 11 | | | | | N | 010211 | ຊຸດຂໍ້ມູນທີ່ບົ່ງບອກຮູບແບບການຊໍາລະຂອງ ລາວຄິວອາ ໂດຍກໍານົດໃຫ້ Static ລາວຄິວອາ ມີຄ່າເທົ່າກັບ "11" ແລະ Dynamic ລາວຄິວອາ ມີຄ່າເທົ່າກັບ"12". |
| "02" | Reserved for Visa | 16 | 4000123456789012 | | | | | ans | 02164000123456789012 | ການສ້າງ ລະຫັດຄິວອາເພື່ອຮັບຊໍາລະຂອງເຄືອຂ່າຍບັດ Visa. |
| "52" | Merchant category code | 04 | 5251 | | | | | N | 52045251 | ກໍານົດຕາມມາດຕະຖານ ISO 18245 ແລະ ຖືກກໍານົດໂດຍ Acquirer. |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| “53” | Transaction Currency | 03 | 418 | | | | | N | 5303418 | ກໍານົດຕາມ ມາດຕະຖານ [ISO 4217] ຊຶ່ງມີ 03 ຕົວ ເລກ ເຊັ່ນ: 418 ແມ່ນລະຫັດສະກຸນ ເງິນກີບ. |
| “58” | Country code | 02 | LA | | | | | ans | 5802LA | ລະຫັດຂອງປະເທດ ກໍານົດຕາມມາດຕະ ຖານ [ISO 3166-1 alpha 2] ໂດຍ ສອງ ຕົວອັກສອນ ເຊັ່ນ: LA ແມ່ນ ລະຫັດປະເທດລາວ. |
| “59” | Merchant name | Var. up to 25 | Lao Coffee | | | | | ans | 5910LAO COFFEE | ຊື່ຜູ້ຮັບຊໍາລະ. |
| “60” | Merchant city | Var. up to 15 | Vientiane | | | | | ans | 6009VIENT AINE | ທີ່ຕັ້ງເມືອງຂອງຜູ້ ຮັບຊໍາລະໃນຂະນະທີ່ ເຮັດທຸລະກໍາການຊໍາ ລະ. |
| “63” | Cyclic Redundancy Check (CRC) | 04 | A13A | | | | | ans | 6304A13A | ການຄິດໄລ່ຄ່າຂອງຂໍ້ ມູນຕົວອັກສອນທັງ ໝົດໂດຍອີງຕາມ ມາດຕະຖານ [ISO/IEC 13239]. |

ເອກະສານຊ້ອນທ້າຍ 2: ກຸ່ມຂໍ້ມູນທົ່ວໄປຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ

| ລະຫັດຫຼັກ **(ID)** | ເນື້ອໃນຂໍ້ມູນ **(Data Object)** | ຮູບແບບ **(Format)** | ຄວາມຍາວຂອງຂໍ້ມູນ **(Length)** | ການສະແດງ ຂໍ້ມູນ **(Presence)** | ຄວາມໝາຍ **(Description)** |
|---|---|---|---|---|---|
| "00" | Payload Format Indicator | N | "02" | M | ອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ ແມ່ນໄດ້ກໍານົດ Version ຂອງ QR Code, "01" ແມ່ນ Version 01 |
| "01" | Point of Initiation | N | "02" | M | ອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ ທີ່ໄດ້ກໍານົດຮູບແບບການຊໍາລະຂອງ ລາວຄິວອາ ໂດຍກໍານົດໃຫ້ Static ມີຄ່າເທົ່າກັບ "11" ແລະ Dynamic ມີຄ່າເທົ່າກັບ "12" |
| "63" | Cyclic Redundancy Check (CRC) | ans | "04" | M | ການກວດສອບຄວາມຖືກຕ້ອງຂອງຂໍ້ມູນທັງໝົດໂດຍອີງຕາມມາດຕະ ຖານ [ISO/IEC 13239]. |

ເອກະສານຊ້ອນທ້າຍ 3: ກຸ່ມຂໍ້ມູນບັນຊີຜູ້ຮັບຊຳລະຕາມມາດຕະຖານລາວຄິວອາ ເພື່ອການຊຳລະ ກວມເອົາລະຫັດຫຼັກ "02" ຫາ "51"

| ລະຫັດຫຼັກ (ID) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູນ (Length) | ການສະແດງຂໍ້ມູນ (Presence) | ລະຫັດຍ່ອຍ (Sub ID) | ເນື້ອໃນຂໍ້ມູນ(Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູນ (Length) | ການສະແດງ ຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|---|---|---|---|
| 02-25 | ອີງຕາມມາດຕະຖານ ອີເອັມວີ ຄິວອາຊີພີເອັສ: Merchant-Presented Mode | | | | | | | | |
| 26-37 | ອີງຕາມມາດຕະຖານ ອີເອັມວີ ຄິວອາຊີພີເອັສ: Merchant-Presented Mode | | | | | | | | |
| 38 | ans | var. up to "99" | C | ນຳໃຊ້ສຳລັບການຊຳລະ ຂອງ ສປປ ລາວ | | | | | |
| | | | | "00" | AID | ans | "16" | M | ຕົວຢ່າງ: ເລກລະຫັດລະບຸຕົວຕົນຂອງApplication ຕ້ອງໄດ້ຂຶ້ນທະບຽນນຳອົງການຈັດຕັ້ງສາກົນ A000000677012111 |
| | | | | "01" | IIN | N | "06" | M | ຕົວຢ່າງ: ເລກລະຫັດທີ່ລະບຸຕົວຕົນຂອງຜູ້ໃຫ້ບໍລິການຊຳລະ BCEL= 621354; LDB= 941899 |
| | | | | "02" | Payment Type | N | "03" | M | ຕົວຢ່າງ: ປະເພດການຊຳລະ 001= Credit fund transfer; 002= Bill Payment; 003= e-donation; ແລະ ອື່ນໆ |
| | | | | "03" | Receiver ID | ans | var. up to "25" | M | ຕົວຢ່າງ: ລະຫັດຜູ້ຮັບເງິນ abcdfegh10049 ລະຫັດສະເພາະຂອງຜູ້ຮັບເງິນ |

| | | | | | | | | | |
|---|---|---|---|---|---|---|---|---|---|
| | | | | "04" | Invoice ID | ans | var. up to "25 | C | ນຳໃຊ້ສະເພາະຜູ້ໃຫ້ບໍລິການຮັບຊຳລະໂດຍເລກທີ່ມີໃບບິນຂອງແຕ່ລະນິຕິບຸກ ຄົນ e.g: 00000100 ເລກບິນນ້ຳປະປາ |
| | | | | "05" | Terminal ID | ans | var. up to "25 | C | ນຳໃຊ້ສະເພາະຜູ້ຮັບຊຳລະທີ່ໃຊ້ເຄື່ອງ EDC ເພື່ອສ້າງ QR ໃຫ້ລູກຄ້າສະແກນເພື່ອຊຳລະເງິນ |
| | | | | "06" | Branch ID | ans | var. up to "25 | C | ນຳໃຊ້ກໍລະນີ້ທາງຮ້ານມີຫຼາຍສາຂາ. |
| | | | | "07" | Product ID | N | var. up to "25 | O | ຮອງຮັບສຳລັບຜູ້ຮັບຊຳລະທີ່ຕ້ອງ ການຢາກລະບຸລະຫັດຜະລິດຕະພັນຕ່າງໆ. |
| | | | | "08" | Reference Number of Transaction | N | "8" | O | ຮອງຮັບໄວເພື່ອນຳໄປໃຊ້ແກ້ໄຂຂໍ້ຂັດແຍ້ງ e.g: 00000021 |
| | | | | "09"-"99" | ຮອງຮັບການຊຳລະຜ່ານລາວຄິວອາໃນອະນາຄົດ | | | | |
| "39" | ans | "99" | ຮັກສາໄວ້ສຳລັບການພັດທະນານະວັດຕະກຳໃໝ່ (Payment Innovation) | | | | | | |
| "40-51" | ອີງຕາມມາດຕະຖານ ອີເອັມວີ ຄິວອາຊີພີເອັສ: Merchant-Presented Mode | | | | | | | | |

ເອກະສານຊ້ອນທ້າຍ 4: ກຸ່ມຂໍ້ມູນເພີ່ມເຕີມຂອງຜູ້ຮັບຊຳລະຕາມມາດຕະຖານລາວຄິວອາ ເພື່ອການຊຳລະ

| ລະຫັດຫຼັກ (ID) | ເນື້ອໃນຂໍ້ມູນ (Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູ (Length) | ການສະແດງຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|
| "52" | Merchant category code | N | "04" | M | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ທີ່ໄດ້ກຳນົດຕາມມາດຕະຖານ ISO 18245 ແລະ ຖືກກຳນົດໂດຍຜູ້ໃຫ້ບໍລິການແກ່ຜູ້ຮັບຊຳລະ (Acquirer). |
| "58" | Country code | ans | "02" | M | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ໄດ້ກຳນົດຕາມມາດ ຕະຖານ [ISO 3166-1 alpha 2] ໂດຍປະກອບມີ 02 ຕົວອັກສອນຫຍໍ້ ເຊັ່ນ: LA ແມ່ນ ລະຫັດປະເທດລາວ. |
| "59" | Merchant name | ans | Var. up to "25" | O | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ໄດ້ກຳນົດໄວ້ສຳລັບຊື່ຂອງຜູ້ຮັບຊຳລະ |
| "60" | Merchant city | ans | Var. up to "15" | O | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ໄດ້ກຳນົດໄວ້ສຳລັບທີ່ຕັ້ງຂອງເມືອງທີ່ຜູ້ຮັບຊຳລະຂະນະທີ່ເຮັດທຸລະກຳການຊຳລະ |
| "61" | Postal Code | ans | Var. up to "10" | O | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ໄດ້ກຳນົດ ລະຫັດ ໄປສະນີຂອງຜູ້ຮັບຊຳລະ |
| "64" | Merchant Information-Alternate Language | S | Var. up to "99" | O | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ໄດ້ກຳນົດໄວ້ສຳລັບພາສາທີ່ຜູ້ຮັບຊຳລະໃຊ້ ຫຼື ພາສາທ້ອງຖິ່ນທີ່ໃຊ້. |

ເອກະສານຊ້ອນທ້າຍ 5: ກຸ່ມຂໍ້ມູນກ່ຽວກັບມູນຄ່າຂອງທຸລະກຳຕາມມາດຕະຖານລາວຄິວອາ ເພື່ອການຊຳລະ

| ລະຫັດຫຼັກ (ID) | ເນື້ອໃນຂໍ້ມູນ (Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູນ (Length) | ການສະແດງຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|
| "53" | Transaction Currency | N | "03" | M | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ທີ່ໄດ້ກຳນົດໄວ້ຕາມມາດຕະຖານ [ISO 4217] ຊຶ່ງບໍ່ສາມາດປ່ຽນແປງໄດ້. ລະຫັດສະກຸນເງິນ ແມ່ນປະກອບມີ 03 ຕົວເລກຄື: 418 ແມ່ນລະຫັດສະກຸນເງິນກີບ |
| "54" | Transaction Amount | N | Var. up to "08" | C | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ທີ່ໄດ້ກຳນົດມູນຄ່າການເຮັດທຸລະກຳ ຜ່ານ Application ໃນໂທລະສັບມືຖື ຊຶ່ງຖືກນຳໃຊ້ສະເພາະໃນຮູບແບບ Dynamic QR Code. |
| "55" | Tip or convenience indicator | ans | Var. up to "25" | O | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ທີ່ໄດ້ກຳນົດມູນຄ່າສ່ວນຕ່າງທາງການຄ້າຕ່າງໆ ອາດຈະສະແດງດ້ວຍຕົວເລກຖ້ວນ ຫຼື ເປີເຊັນ. |
| "56" | Value of convenience fee fixed | ans | Var. up to "13" | O | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ທີ່ໄດ້ກຳນົດໄວ້ຖ້າຫາກ ID "55" ມີຄ່າ 02 ID "56" ຈະໃຊ້ໃນກໍລະນີເປັນຄ່າທຳນຽມທີ່ຄິດໄລ່ເປັນມູນຄ່າຄົງທີ່. |
| "57" | Value of convenience fee percentage | ans | Var. up to "05" | O | ອີງຕາມການກຳນົດ ອີເອັມວີ ຄິວອາຊີພີເອັສ ທີ່ໄດ້ກຳນົດໄວ້ຖ້າຫາກ ID "55" ມີຄ່າ 03 ID "56" ຈະໃຊ້ໃນກໍລະນີເປັນຄ່າທຳນຽມທີ່ຄິດໄລ່ເປັນສ່ວນຮ້ອຍ. |
| "81" | Value Added Tax | ans | Var. up to "99" | O | ຮັກສາໄວ້ສຳລັບທຸລະກຳກ່ຽວກັບອາກອນມູນຄ່າເພີ່ມ (Value Added Tax) |

ເອກະສານຊ້ອນທ້າຍ 6: ກຸ່ມຂໍ້ມູນເພີ່ມເຕີມຕາມມາດຕະຖານລາວຄິວອາ ເພື່ອການຊໍາລະ

| ລະຫັດຫຼັກ (ID) | ລະຫັດຍ່ອຍ (Sub ID) | ເນື້ອໃນຂໍ້ມູນ (Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູນ (Length) | ການສະແດງຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|---|
| "62" | "01" | Bill number | ans | Var. up to "25" | O | ແມ່ນຈະກໍານົດກ່ອຍເລກໃບບິນ ຫຼື ໃບຮຽກເກັບໜີ້ ໂດຍອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |
| | "02" | Mobile number | ans | Var. up to "25" | O | ເບີໂທລະສັບຂອງຜູ້ຮັບຊໍາລະ ໂດຍອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |
| | "03" | Store label | ans | Var. up to "25" | O | ຊື່ປ້າຍຮ້ານ. ອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |
| | "04" | Loyalty number | ans | Var. up to "25" | O | ເລກບັດສະມາຊິກ ໂດຍອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |
| | "05" | Reference label | | Var. up to "25" | O | ຂໍ້ມູນອ້າງອີງຕາມປ້າຍ ໂດຍອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |
| | "06" | Customer label | | Var. up to "25" | O | ຂໍ້ມູນລູກຄ້າຊຶ່ງອາດຈະຖືກອ້າງອີງໂດຍບັດປະຈໍາຕົວ, ບັດນັກສຶກສາ ແລະ ອື່ນໆ ໂດຍອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |
| | "07" | Terminal label | | Var. up to "25" | O | ລະຫັດເຄື່ອງ EDC ໂດຍອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |
| | "08" | Purpose of transaction | | Var. up to "25" | O | ຈຸດປະສົງຂອງການເຮັດທຸລະກໍາ ໂດຍອີງຕາມການກໍານົດຂອງ ອີເອັມວີ ຄິວອາຊີພີເອັສ |

| | | | | | | |
|---|---|---|---|---|---|---|
| | "09" | Additional customer data request | | Var. up to "03" | O | ຂໍ້ມູນເພີ່ມເຕີມຂອງລູກຄ້າໂດຍອີງຕາມການກໍານົດຂອງ ອີເອັມວີ ຄໍອອາຊີພີເອັສ |
| | "10" -"49" | Reserved for future use for EMVCo | | S | O | ອີງຕາມການກໍານົດຂອງ ອີເອັມວີ ຄໍອອາຊີພີເອັສ |
| | "50"- "99" | Payment System Specific Templates | | S | O | ອີງຕາມການກໍານົດຂອງ ອີເອັມວີ ຄໍອອາຊີພີເອັສ |

ເອກະສານຊ້ອນທ້າຍ 7: ປະເພດການຊຳລະຜ່ານລາວຄິວອາ (ລະຫັດຍ່ອຍ "02")

| ປະເພດການຊຳລະ | ພາສາອັງກິດ | ພາສາລາວ |
|---|---|---|
| 001 | Credit Fund Transfer | ທຸລະກຳການໂອນເງິນ ຜ່ານລາວຄິວອາ |
| 002 | QR Payment | ການຊຳລະຜ່ານລາວຄິວອານຳຜູ້ຮັບຊຳລະ |
| 003 | Bill Payment | ການຊຳລະຜ່ານລາວຄິວອາຕາມໃບບິນ |
| 004 | e-donation | ຮອງຮັບການບໍລິຈາກ |
| 005 | e-commerce | ການຄ້າທາງເອເລັກໂຕຣນິກ" |
| 006-999 | Reserved for Future Use | ຮັກສາໄວ້ເພື່ອນຳໃຊ້ໃນອະນາຄົດ |

ລະຫັດຍ່ອຍ "006"- "999" ຮັກສາໄວ້ສຳລັບປະເພດການໃຫ້ບໍລິການຊຳລະຜ່ານລາວຄິວອາ ທີ່ເພີ່ມຂຶ້ນໃນອາຊີງກົມຄຸ້ມຄອງລະບົບຊຳລະສະສາງ ເປັນຜູ້ກຳນົດປະເພດການຊຳລະຜ່ານ ລາວຄິວອາ ຢ່າງລວມສູນ.

ເອກະສານຊ້ອນທ້າຍ 8: ລາຍການຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນການໂອນເງິນຜ່ານລາວຄິວອາ

| ລະຫັດຫຼັກ (ID) | ລະຫັດຍ່ອຍ (Sub ID) | ເນື້ອໃນຂໍ້ມູນ (Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູ (Length) | ການສະແດງຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|---|
| "00" | | Payload Format Indicator | N | "02" | M | ແມ່ນກຳນົດ Version ຂອງ ອີເອັມວີ ຄິວອາຊີພີເອັສ, "01" ແມ່ນ Version 01 |
| "01" | | Point of Initiation Method | N | "02" | M | ຮູບແບບການຊຳລະຂອງ ລາວຄິວອາ ໂດຍກຳນົດໃຫ້ Static ລາວຄິວອາ ມີຄ່າເທົ່າກັບ "11" ແລະ Dynamic ລາວຄິວອາມີຄ່າເທົ່າກັບ "12" |
| "38" | "00" | AID | ans | "16" | M | ຕົວຢ່າງ: A000000677012111 |
| | "01" | IIN | N | "06" | M | ຕົວຢ່າງ: BCEL= 621354; LDB= 941899 |
| | "02" | Payment Type | N | "03" | M | 001= Credit fund transfer |
| | "03" | Receiver ID | ans | Var. up to "25" | M | ຕົວຢ່າງ: abcdfegh10049 ລະຫັດສະເພາະຂອງຜູ້ຮັບເງິນ |
| | "08" | Reference number of transaction | N | "8" | O | ຂອງຮັບໄວ້ເພື່ອນຳໄປໃຊ້ແກ້ໄຂຂໍ້ຂັດແຍ້ງ ຕົວຢ່າງ: 00000021 |
| "53" | | Transaction Currency | N | "03" | M | ລະຫັດຂອງສະກຸນເງິນທີ່ເຮັດທຸລະກຳ ຊຶ່ງກຳນົດດ້ວຍ ສາມ ຕົວເລກອີງຕາມມາດຕະຖານ ISO 4217 ເຊັ່ນ: 418 ແມ່ນລະຫັດສະກຸນເງິນກີບ |
| "58" | | Country Code | ans | "02" | M | ລະຫັດຂອງປະເທດ ໂດຍອີງຕາມມາດຕະຖານ [ISO 3166-1 alpha 2] ຊຶ່ງມີ ສອງ ຕົວອັກສອນ ເຊັ່ນ: LA ແມ່ນລະຫັດຂອງປະເທດລາວ |
| "63" | | Cyclic Redundancy Check (CRC) | ans | "04" | M | ການຄິດໄລ່ຄ່າຂອງຂໍ້ມູນຕົວອັກສອນທັງໝົດ ໂດຍອີງຕາມມາດຕະຖານ [ISO/IEC 13239] |

ຕາຕະລາງທີ 09: ລາຍການຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນການຊໍາລະຜ່ານລາວຄິວອາ ນໍາຜູ້ຮັບຊໍາລະ

| ລະຫັດຫຼັກ (ID) | ລະຫັດຍ່ອຍ (Sub ID) | ເນື້ອໃນຂໍ້ມູນ(Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູນ (Length) | ການສະແດງຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|---|
| "00" | | Payload Format Indicator | N | "02" | M | Version ຂອງ ຂອງ ອີເອັມວີ ຄິວອາຊີພີເອັສ, "01" ແມ່ນ Version 01 |
| "01" | | Point of Initiation Method | N | "02" | M | ຮູບແບບການຊໍາລະຂອງ ລາວຄິວອາໂດຍກໍານົດໃຫ້ Static ລາວຄິວອາ ມີຄ່າເທົ່າກັບ "11" ແລະ Dynamic ລາວຄິວອາ ມີຄ່າເທົ່າກັບ "12" |
| "38" | "00" | AID | ans | "16" | M | ຕົວຢ່າງ: A000000677012111 |
| | "01" | IIN | N | "06" | M | ຕົວຢ່າງ: BCEL= 621354; LDB= 941899 |
| | "02" | Payment Type | N | "03" | M | 002= ການຊໍາລະເງິນຜ່ານ ລາວຄິວອາທີ່ຜູ້ຮັບຊໍາລະ (Static QR Code) |
| | "03" | Receiver ID | ans | Var. up to "25" | M | ຕົວຢ່າງ: abcdfegh10049 ລະຫັດສະເພາະຂອງຜູ້ຮັບເງິນ |
| | "05" | Terminal ID | ans | Var. up to "25 | C | ນໍາໃຊ້ສະເພາະຮ້ານຄ້າທີ່ໃຊ້ເຄື່ອງ POS ເພື່ອສ້າງ QR ໃຫ້ລູກຄ້າສະແກນເພື່ອຊໍາລະເງິນ. (Dynamic QR Code) |
| | "08" | Reference number of transaction | N | "8" | O | ຮອງຮັບໄວ້ເພື່ອນໍາໄປໃຊ້ແກ້ໄຂຂໍ້ຂັດແຍ້ງ ຕົວຢ່າງ: 00000021 |
| "52" | | Merchant Category Code | N | "04" | M | ອີງມາດຕະຖານ ISO 18245 ແລະ ຖືກກໍານົດໂດຍ Acquirer |
| "53" | | Transaction Currency | N | "03" | M | ລະຫັດຂອງສະກຸນເງິນທີ່ເຮັດທຸລະກໍາ ຊຶ່ງກໍານົດດ້ວຍ ສາມ ຕົວເລກອີງຕາມມາດຕະຖານ ISO 4217 ເຊັ່ນ: 418 ແມ່ນລະຫັດສະກຸນເງິນກີບ |

| | | | | | | |
|---|---|---|---|---|---|---|
| “54” | | Transaction Amount | ans | Var. Up to “13” | C | ມູນຄ່າຂອງທຸລະກຳນຳໃຊ້ສະເພາະໃນຮູບແບບ Dynamic QR Code |
| “58” | | Country Code | ans | “02” | M | ລະຫັດຂອງປະເທດ ໂດຍອີງຕາມມາດຕະຖານ [ISO 3166-1 alpha 2] ຊຶ່ງມີ ສອງ ຕົວອັກສອນ ເຊັ່ນ: LA ແມ່ນລະຫັດຂອງປະເທດລາວ |
| “63” | | Cyclic Redundancy Check (CRC) | ans | “04” | M | ການຄິດໄລ່ຄ່າຂອງຂໍ້ມູນຕົວອັກສອນທັງໝົດ ໂດຍອີງຕາມມາດຕະຖານ [ISO/IEC 13239] |

**ເອກະສານຊ້ອນທ້າຍ 10: ລາຍການຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນ ການຊໍາລະຜ່ານລາວຄິວອາ ຕາມໃບແຈ້ງໜີ້**

| ລະຫັດຫຼັກ (ID) | ລະຫັດຍ່ອຍ (Sub ID) | ເນື້ອໃນຂໍ້ມູນ (Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູນ (Length) | ການສະແດງຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|---|
| "00" | | Payload Format Indicator | N | "02" | M | Version ຂອງ ຂອງ ອີເອັມວີ ຄິວອາຊີພີເອັສ, "01" ແມ່ນ Version 01 |
| "01" | | Point of Initiation Method | N | "02" | M | ຮູບແບບການຊໍາລະຂອງ ລາວຄິວອາໂດຍກໍານົດໃຫ້ Static ລະຫັດຄິວອາ ມີຄ່າເທົ່າກັບ "11" ແລະ Dynamic ລະຫັດຄິວອາ ມີຄ່າເທົ່າກັບ "12" |
| "38" | "00" | AID | ans | "16" | M | ຕົວຢ່າງ: A000000677012111 |
| | "01" | IIN | N | "06" | M | ຕົວຢ່າງ: BCEL= 621354; LDB= 941899 |
| | "02" | Payment Type | N | "03" | M | 003= ການຊໍາລະເງິນຜ່ານ ລາວຄິວອາຕາມໃບແຈ້ງໜີ້ (Bill Payment) |
| | "03" | Receiver ID | ans | Var. up to "25" | M | ຕົວຢ່າງ: abcdfegh10049 ລະຫັດສະເພາະຂອງຜູ້ຮັບເງິນ |
| | "05" | Terminal ID | ans | Var. up to "25 | C | ນໍາໃຊ້ສະເພາະຜູ້ຮັບຊໍາລະທີ່ໃຊ້ເຄື່ອງ POS ເພື່ອສ້າງ QR ໃຫ້ລູກຄ້າສະແກນ ເພື່ອຊໍາລະເງິນ (Dynamic QR Code) |
| | "08" | Reference number of transaction | N | "8" | O | ຮອງຮັບໄວ້ເພື່ອນໍາໄປໃຊ້ແກ້ໄຂຂໍ້ຂັດແຍ້ງ ຕົວຢ່າງ: 00000021 |
| "52" | | Merchant Category Code | N | "04" | M | ຕາມມາດຕະຖານ ISO 18245 ແລະ ຖືກກໍານົດໂດຍ Acquirer |
| "53" | | Transaction Currency | N | "03" | M | ລະຫັດຂອງສະກຸນເງິນທີ່ເຮັດທຸລະກໍາ ຊຶ່ງກໍານົດດ້ວຍ ສາມ ຕົວເລກ ໂດຍອີງຕາມມາດຕະຖານ ISO 4217 ເຊັ່ນ: 418 ແມ່ນລະຫັດສະກຸນເງິນກີບ. |

| | | | | | | |
|---|---|---|---|---|---|---|
| “54” | | Transaction Amount | ans | Var. Up to “13” | C | ມູນຄ່າຂອງທຸລະກຳນຳໃຊ້ສະເພາະໃນຮູບແບບ Dynamic QR Code |
| “58” | | Country Code | ans | “02” | M | ລະຫັດຂອງປະເທດ ໂດຍອີງຕາມມາດຕະຖານ [ISO 3166-1 alpha 2] ຊຶ່ງມີ ສອງ ຕົວອັກສອນ ເຊັ່ນ: LA ແມ່ນລະຫັດຂອງປະເທດລາວ |
| “63” | | Cyclic Redundancy Check (CRC) | ans | “04” | M | ການຄິດໄລ່ຄ່າຂອງຂໍ້ມູນຕົວອັກສອນທັງໝົດ ໂດຍອີງຕາມມາດຕະຖານ [ISO/IEC 13239] |

ເອກະສານຊ້ອນທ້າຍ 11: ລາຍການຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນ ການຮັບບໍລິການຜ່ານລາວຄິວອາ

| ລະຫັດຫຼັກ (ID) | ລະຫັດຍ່ອຍ (Sub ID) | ເນື້ອໃນຂໍ້ມູນ (Data Object) | ຮູບແບບ (Format) | ຄວາມຍາວຂອງຂໍ້ມູນ (Length) | ການສະແດງຂໍ້ມູນ (Presence) | ຄວາມໝາຍ (Description) |
|---|---|---|---|---|---|---|
| "00" | | Payload Format Indicator | N | "02" | M | Version ຂອງ ຂອງ ອີເອັມວີ ຄິວອາຊີພີເອັສ, "01" ແມ່ນ Version 01 |
| "01" | | Point of Initiation Method | N | "02" | M | ຮູບແບບການຊໍາລະຂອງ ລາວຄິວອາໂດຍກໍານົດໃຫ້ Static ລະຫັດຄິວອາ ມີຄ່າເທົ່າກັບ "11" ແລະ Dynamic ລະຫັດຄິວອາ ມີຄ່າເທົ່າກັບ "12" |
| "38" | "00" | AID | ans | "16" | M | ຕົວຢ່າງ: A000000677012111 |
| | "01" | IIN | N | "06" | M | ຕົວຢ່າງ: BCEL= 621354; LDB= 941899 |
| | "02" | Payment Type | N | "03" | M | 005= ການຊໍາລະທາງການຄ້າເອເລັກໂຕຣນິກຜ່ານ ລະຫັດຄິວອາ (e-commerce) |
| | "03" | Receiver ID | ans | Var. up to "25" | M | ຕົວຢ່າງ: abcdfegh10049 ລະຫັດສະເພາະຂອງຜູ້ຮັບເງິນ |
| | "08" | Reference number of transaction | N | "8" | O | ຮອງຮັບໄວ້ເພື່ອນໍາໄປໃຊ້ແກ້ໄຂຂໍ້ຂັດແຍ້ງ ຕົວຢ່າງ: 00000021 |
| "52" | | Merchant Category Code | N | "04" | M | ຕາມມາດຕະຖານ ISO 18245 ແລະ ຖືກກໍານົດໂດຍ Acquirer. |
| "53" | | Transaction Currency | N | "03" | M | ລະຫັດຂອງສະກຸນເງິນທີ່ເຮັດທຸລະກໍາ ຊຶ່ງມີ ສາມຕົວເລກອີງຕາມມາດຕະຖານ ISO 4217 ເຊັ່ນ: 418 ແມ່ນລະຫັດສະກຸນເງິນກີບ |
| "54" | | Transaction Amount | ans | Var. Up to "13" | C | ມູນຄ່າຂອງທຸລະກໍານໍາໃຊ້ສະເພາະໃນຮູບແບບ Dynamic QR Code |

| | | | | | | |
|---|---|---|---|---|---|---|
| “58” | | Country Code | ans | “02” | M | ລະຫັດຂອງປະເທດ ອີງຕາມມາດຕະຖານ [ISO 3166-1 alpha 2] ຊຶ່ງມີ ສອງ ຕົວອັກສອນ ເຊັ່ນ: LA ລະຫັດຂອງປະເທດລາວ |
| “63” | | Cyclic Redundancy Check (CRC) | ans | “04” | M | ການຄິດໄລ່ຄ່າຂອງຂໍ້ມູນຕົວອັກສອນທັງໝົດ ອີງຕາມມາດຕະຖານ [ISO/IEC 13239] |

ເອກະສານຊ້ອນທ້າຍ **12:** ລາຍການຂໍ້ມູນຕໍ່າສຸດທີ່ຕ້ອງສະແດງຢູ່ໃນ ການຄ້າທາງເອເລັກໂຕຣນິກຜ່ານລາວຄິວອາ

| ລະຫັດຫຼັກ **(ID)** | ລະຫັດຍ່ອຍ **(Sub ID)** | ເນື້ອໃນຂໍ້ມູນ **(Data Object)** | ຮູບແບບ **(Format)** | ຄວາມຍາວຂອງຂໍ້ມູນ **(Length)** | ການສະແດງຂໍ້ມູນ **(Presence)** | ຄວາມໝາຍ **(Description)** |
|---|---|---|---|---|---|---|
| "00" | | Payload Format Indicator | N | "02" | M | Version ຂອງ ຂອງ ອີເອັມວີ ຄິວອາຊີພີເອັສ, "01" ແມ່ນ Version 01 |
| "01" | | Point of Initiation Method | N | "02" | M | ຮູບແບບການຊໍາລະຂອງ ລະຫັດຄິວອາໂດຍກໍານົດໃຫ້ Static ລະຫັດຄິວອາມີຄ່າເທົ່າກັບ "11" ແລະ Dynamic ລະຫັດຄິວອາມີຄ່າເທົ່າກັບ "12" |
| "38" | "00" | AID | ans | "16" | M | ຕົວຢ່າງ: A000000677012111 |
| | "01" | IIN | N | "06" | M | ຕົວຢ່າງ: BCEL= 621354; LDB= 941899 |
| | "02" | Payment Type | N | "03" | M | 003= ການຊໍາລະເງິນຜ່ານ ລະຫັດຄິວອາຕາມໃບແຈ້ງໜີ້ (Bill Payment) |
| | "03" | Receiver ID | ans | Var. up to "25" | M | ຕົວຢ່າງ: abcdfegh10049 ລະຫັດສະເພາະຂອງຜູ້ຮັບເງິນ. |
| | "05" | Terminal ID | ans | Var. up to "25 | C | ນໍາໃຊ້ສະເພາະຜູ້ຮັບຊໍາລະ ທີ່ໃຊ້ເຄື່ອງ POS ເພື່ອສ້າງ QR ໃຫ້ລູກຄ້າສະແກນເພື່ອຊໍາລະເງິນ. (Dynamic QR Code) |
| | "08" | Reference number of transaction | N | "8" | O | ຮອງຮັບໄວ້ເພື່ອນໍາໄປໃຊ້ແກ້ໄຂຂໍ້ຂັດແຍ້ງ ຕົວຢ່າງ: 00000021 |
| "52" | | Merchant Category Code | N | "04" | M | ຕາມມາດຕະຖານ ISO 18245 ແລະ ຖືກກໍານົດໂດຍ Acquirer. |

| | | | | | | |
|---|---|---|---|---|---|---|
| “53” | | Transaction Currency | N | “03” | M | ລະຫັດຂອງສະກຸນເງິນທີ່ເຮັດທຸລະກຳ ຊຶ່ງມີ ສາມ ຕົວເລກ ອີງຕາມມາດຕະຖານ ISO 4217 ເຊັ່ນ: 418 ແມ່ນລະຫັດສະກຸນເງິນກີບ. |
| “54” | | Transaction Amount | ans | Var. Up to “13” | C | ມູນຄ່າຂອງທຸລະກຳນຳໃຊ້ສະເພາະໃນຮູບແບບ Dynamic QR Code |
| “58” | | Country Code | ans | “02” | M | ລະຫັດຂອງປະເທດ ອີງຕາມມາດຕະຖານ [ISO 3166-1 alpha 2] ຊຶ່ງມີ ສອງ ຕົວອັກສອນ ເຊັ່ນ: LA ລະຫັດຂອງປະເທດລາວ |
| “63” | | Cyclic Redundancy Check (CRC) | ans | “04” | M | ການຄິດໄລ່ຄ່າຂອງຂໍ້ມູນຕົວອັກສອນທັງໝົດ ອີງຕາມມາດຕະຖານ [ISO/IEC 13239] |

ເອກະສານຊ້ອນທ້າຍ 13: ຄວາມໝາຍຕົວອັກສອນຫຍໍ້ທີ່ລະບຸໄວ້ໃນມາດຕະຖານລາວຄິວອາ ເພື່ອການຊຳລະ

| ຕົວອັກສອນຫຍໍ້ | ຕົວໜັງສືເຕັມ | ອະທິບາຍຄຳສັບ |
|---|---|---|
| ans | Alpha Numeric Special | ໝາຍເຖິງ ຕົວອັກສອນພິເສດທີ່ສາມາດນຳໃຊ້ໄດ້ທັງເປັນຕົວອັກສອນ, ຕົວເລກ, ເຄື່ອງໝາຍວັກ ຕອນ ແລະ ສັນຍາລັກພິເສດ ຊຶ່ງປະກອບມີຈຳນວນທັງໝົດ 96 ຕົວ |
| CRC | Cyclic Redundancy Check | ໝາຍເຖິງ ການກວດສອບຄວາມຖືກຕ້ອງຂອງຂໍ້ມູນທັງໝົດໃນ ລາວຄິວອາ |
| C | Conditional | ໝາຍເຖິງ ຂໍ້ມູນທີ່ສະແດງພາຍໃຕ້ເງື່ອນໄຂໃດໜຶ່ງ |
| ID | Identifier of the Data Object | ໝາຍເຖິງ ລະຫັດຫຼັກ ທີ່ໃຊ້ໃນການຢັ້ງຢືນຕົວຕົນເນື້ອໃນຂໍ້ມູນໃນ ລາວຄິວອາ ຊຶ່ງລະຫັດຫຼັກແທນດ້ວຍຕົວເລກແຕ່ "00" ຫາ "99" |
| ISO | International Standard Organization | ໝາຍເຖິງ ໜ່ວຍງານທີ່ກຳນົດມາດຕະຖານສາກົນດ້ານໃດໜຶ່ງ |
| M | Mandatory | ໝາຍເຖິງ ຂໍ້ມູນທີ່ຈຳເປັນຕ້ອງມີ ແລະ ຕ້ອງສະແດງສະເໝີ |
| N | Numeric | ໝາຍເຖິງ ຂໍ້ມູນທີ່ກຳນົດໃຫ້ໃຊ້ສະເພາະຕົວເລກເທົ່ານັ້ນ ຊຶ່ງຕົວເລກທັງໝົດລວມມີ ສິບ ຕົວເລກ ແຕ່ 0-9 |
| O | Optional | ໝາຍເຖິງ ຂໍ້ມູນທີ່ອາດຈະສະແດງ ຫຼື ບໍ່ສະແດງກໍໄດ້ |
| RFU | Reserved for Future Use | ໝາຍເຖິງ ຂໍ້ມູນທີ່ຈອງໄວ້ເພື່ອນຳໃຊ້ໃນອະນາຄົດ |
| S | String | ໝາຍເຖິງ ຄ່າທີ່ສະແດງໂດຍຕົວອັກສອນຕ່າງໆທີ່ກຳນົດໃນ (Unicode) |
| var. | Variable | ໝາຍເຖິງ ຕົວປ່ຽນ |

| | | |
|---|---|---|
| SDK | Software Development Kit | ໝາຍເຖິງ ຊຸດພັດທະນາຊອບແວ ເປັນຊຸດຂອງເຄື່ອງມືພັດທະນາຊອບແວທີ່ຊ່ວຍໃຫ້ການສ້າງໂປແກຼມສຳລັບແພັກເກດຊອບແວບາງອັນ, ກອບຊອບແວ, Platform ຮາດແວ ໃນລະບົບຄອມພິວເຕີ |